ຄະນະກຳມະທິການແມ່ນ້ຳຂອງສາກົນ

**ຫ້ອງການກອງເລຂາ ປະຈຳນະຄອນຫລວງ ພະນົມເປັນ**
576 ຖະໜົນ ເລກ 2, ຈັກ ອັງເກຣ ຄອມ
ຕູ້ ປໜ 623 ພະນົມເປັນ, ລາຊາອະນາຈັກ ກຳປູເຈັຽ
ໂທລະສັບ. (855-23) 425 353. ໂທລະສານ (855-23) 425 363

**ຫ້ອງການກອງເລຂາ ປະຈຳນະຄອນຫລວງວຽງຈັນ**
ຫ້ອງການຜູ້ອຳນວຍການໃຫຍ່
184 ຖະໜົນ ຟ້າງຸ່ມ, ຕູ້ ປໜ 6101, ນະຄອນຫລວງວຽງຈັນ, ສປປ ລາວ
ໂທລະສັບ Tel: (856-21) 263 263. ໂທລະສານ (856-21) 263 264

# ບົດຖະແຫລງຂ່າວ

## ບັນດາປະເທດລຸ່ມແມ່ນ້ຳຂອງ ຈະຕົກລົງກັນກ່ຽວກັບຂະບວນການແຈ້ງ ແລະ ການການປຶກສາຫາລ່ວງໜ້າ (Procedure for Notification and Prior Consultation Agreement ຫລື PNPCA ກ່ຽວກັບໂຄງການ ໄຊຍະບຸລີ ໃນລະດັບລັດຖະມົນຕີ

ສປປ ລາວ ຢ້ຳຄືນວ່າ ຂະບວນການປຶກສາຫາລື ໄດ້ສິ້ນສຸດສົມບູນແລ້ວ ໃນຂະນະທີ່ ປະເທດສາມະຊິກ ອື່ນໆ ໄດ້ສະແດງຄວາມກັງວົນກ່ຽວກັບຜົນກະທົບ ແລະ ຊ່ອງຫວ່າງ ດ້ານຄວາມຮູ້ວິຊາການ ແລະ ມາດຕະການ ຫລຸດຜ່ອນຜົນກະທົບ

**ວັນທີ 19 ເມສາ 2011, ນະຄອນຫລວງວຽງຈັນ, ສປປ ລາວ,** ມື້ນີ້ ປະເທດ ກຳປູເຈັຽ, ສປປ ລາວ, ໄທ ແລະ ຫວຽດນາມ ໄດ້ຕົກລົງກັນວ່າ ໃຫ້ນຳເອົາການພິຈາລະນາການຕັດສິນຕົກລົງ ກ່ຽວກັບ ຂະບວນການປຶກສາຫາລື ກ່ຽວກັບ ການສະເໜີສ້າງເຂື່ອນໄຊຍະບຸລີ ໄປຫາລືກັນ ໃນລະດັບລັດຖະມົນຕີ ເນື່ອງຈາກບໍ່ສາມາດຕົກລົງກັນໄດ້ ກ່ຽວກັບວິທີການດຳເນີນໂຄງການນີ້.

ບັນດາສາມະຊິກທັງ 4 ປະເທດ ຂອງຄະນະກຳມະທິການແມ່ນ້ຳຂອງສາກົນ ຫລື Mekong River Commission ໄດ້ໃຫ້ຂໍ້ສະຫລຸບໃນ ກອງປະຊຸມພິເສດຂອງຄະນະກຳມະການຮ່ວມຂອງຄະນະກຳມະທິການແມ່ນ້ຳຂອງສາກົນ ຫລື MRC Joint Committee ທີ່ຈັດຂຶ້ນ ຢູ່ທີ່ນະຄອນຫລວງວຽງຈັນ ເພື່ອພ້ອມກັນປຶກສາຫາລື ກ່ຽວກັບ ການສະເໜີໂຄງການສ້າງເຂື່ອນໄຊຍະບຸລີ ເຊິ່ງເປັນເຂື່ອນແຫ່ງທຳອິດ ທີ່ຈະສ້າງຂຶ້ນຕາມລຳແມ່ນ້ຳ ຂອງອ່າງແມ່ນ້ຳຂອງ.

ບັນດາ ປະເທດ ສາມະຊິກ ຂອງ ຄະນະກຳມະການຮ່ວມ ເຫັນວ່າ ແຕ່ລະປະເທດ ຍັງມີຄວາມຄິດເຫັນທີ່ແຕກຕ່າງກັນວ່າ ຂະບວນການປຶກສາຫາລືນີ້ ຄວນຈະສິ້ນສຸດ ແຕ່ພຽງເທົ່ານີ້ ຫລື ບໍ່.

ໃນກອງປະຊຸມດັ່ງກ່າວ, ສປປ ລາວ ໄດ້ຢືນຢັນວ່າ ມັນບໍ່ມີຄວາມຈຳເປັນ ທີ່ຈະຕ້ອງຂະຫຍາຍເວລາສຳລັບການປຶກສາຫາລື ເນື່ອງຈາກທາງເລືອກດັ່ງກ່າວນີ້ ບໍ່ສາມາດປະຕິບັດໄດ້ ແລະ ກໍ່ຈະບໍ່ມີຜົນກະທົບທາງດ້ານສິ່ງແວດລ້ອມຕໍ່ປະເທດ ອື່ນໆ.

ປະເທດສະມາຊິກອື່ນໆ ເຊັ່ນ ປະເທດ ກຳປູເຈັຽ, ໄທ ແລະ ຫວຽດນາມ ໄດ້ສະແດງຄວາມກັງວົນກ່ຽວກັບຊ່ອງຫວ່າງ ທາງດ້ານຄວາມຮູ້ວິຊາການ ແລະ ບົດສຶກສາຄົ້ນຄວ້າຂອງໂຄງການ ແລະ ໄດ້ຄາດຄະເນວ່າ ໂຄງການດັ່ງກ່າວຈະມີຜົນກະທົບຕໍ່ສະພາບສິ່ງແວດລ້ອມ ແລະ ຊີວິດການເປັນຢູ່ຂອງປະຊາຊົນທີ່ອາໄສ ຕາມອ່າງແມ່ນ້ຳຂອງ ແລະ ມີຄວາມຈຳເປັນຕ້ອງໄດ້ດຳເນີນການປຶກສາຫາລືກັບປະຊາຊົນຕື່ມອີກ.

ທ່ານ ວິລະພົນ ວິລະວົງ, ຫົວໜ້າຄະນະຜູ້ແທນລາວ, ໄດ້ໃຫ້ທັດສະນະວ່າ: “ພວກຂະພະເຈົ້າ ຮັບເອົາບັນດາຄຳເຫັນຂອງພວກທ່ານ ແຕ່ ພວກຂ້າພະເຈົ້າຈະພິຈາລະນາບັນຫາທັງໝົດ”

ຝ່າຍ ລາວ ສະເໜີວ່າ ຂະບວນການປຶກສາຫາລືຈະສິ້ນສຸດແຕ່ພຽງເທົ່ານີ້ ເນື່ອງຈາກມັນສອດຄ່ອງກັບມາດຕາ 5.5.1 ຂອງລະບຽບການສຳລັບການແຈ້ງ ແລະ ປຶກສາຫາລືລ່ວງໜ້າ ທີ່ກຳນົດໄລຍະເວລາສຳລັບການ ປຶກສາຫາລື ເປັນ 6 ເດືອນ ນັບແຕ່ວັນທີ່ໄດ້ຮັບເອກະສານ ແລະ ມາດຕາ 5.5.2 ທີ່ກຳນົດໄວ້ວາ ໃນກໍລະນີຈຳເປັນ ການຂະຫຍາຍເວລາ ຕ້ອງໄດ້ຮັບອະນຸຍາດ ຈາກການຕັດສິນຕົກລົງຂອງຄະນະ ກຳມະການຮ່ວມຂອງຄະນະກຳມະທິການແມ່ນ້ຳຂອງສາກົນ.

ຝ່າຍ ລາວ ຊີ້ແຈງຕື່ມອີກວ່າ ການຂະຫຍາຍເວລາ ເພື່ອດຳເນີນບົດສຶກສາຄົ້ນຄວ້າ ຕ້ອງການເວລາ 6 ເດືອນ ແລະ ຈະບໍ່ສາມາດຕອບສະໜອງ ແລະ ແກ້ໄຂຄືວາກັງວົນຂອງທຸກ ຝ່າຍ.

ຜູ້ແທນ ລາວ ກ່າວວ່າ: “ໂຄງການໄຊຍະບຸລີ ຈະປະຕິບັດຕາມ ທິດຊີ້ນຳສຳລັບ ການອອກແບບເບື້ອງຕົ້ນທີ່ກອງເລຂາ ຄະນະກຳມະທິການແມ່ນ້ຳຂອງສາກົນໄດ້ກຳນົດ ແລະ ວິທີການປະຕິບັດທີ່ດີຂອງສາກົນ ໂດຍກ່າວຕື່ມອີກວ່າ ຜົນກະທົບອັນໃຫຍ່ໆຕໍ່ການເດີນເຮືອ, ການອົບພະຍົບຂອງປາ, ຕະກອນ, ຄຸນນະພາບຂອງນ້ຳ ແລະ ສະພາບແວດລ້ອມຂອງສັດນ້ຳ ແລະ ຄວາມປອດໄພຂອງເຂື່ອນສາມາດຫລຸດຜ່ອນໄດ້ໃນລະດັບທີ່ພໍຮັບໄດ້.

ເຖິງຢ່າງໃດກໍຕາມ, ປະເທດ ສາມະຊິກອື່ນໆ ຍັງໄດ້ສະແດງຄວາມກັງວົນຫລາຍຢ່າງຕໍ່ກັບຮູບແບບການປະຕິບັດ ທີ່ມີການສະເໜີ ແລະ ໄດ້ໃຫ້ຂໍ້ຊີ້ແນະບາງປະການ.

ປະເທດ ກຳປູເຈັຽ ໃຫ້ທັດສະນະວ່າ ປະເທດ ທີ່ແຈ້ງການສ້າງໂຄງການ ແລະ ຜູ້ພັດທະນາໂຄງການ ຕ້ອງການເວລາຫລາຍກວ່ານີ້ ເພື່ອຫລຸດຜ່ອນຊ່ອງຫວ່າງຂອງຄວາມຮຽກຮ້ອງຕ້ອງການທາງດ້ານວິຊາການ ແລະ ເພື່ອປຶກສາຫາລືຢ່າງມີປະສິດຕິຜົນ ລະຫວ່າງປະເທດສາມະຊິກດ້ວຍກັນ ແລະ ກັບປະຊາຊົນ.

ປະເທດ ກຳປູເຈັຽ ໄດ້ກ່າວວ່າ "ມັນມີຄວາມຈຳເປັນຕ້ອງມີການເຮັດບົດສຶກສາຄົ້ນຄວ້າຮອບດ້ານ ກ່ຽວກັບ ຜົນກະທົບຕໍ່ສິ່ງແວດລ້ອມຂ້າມຊາດ ແລະ ສະສົມ. ປະເທດ ກຳປູເຈັຽ ກ່າວຕື່ມອີກວ່າ "ຕ້ອງໄດ້ວາງມາດຕະການຕອບໂຕ້ອັນຈະແຈ້ງ ແລະ ຊອກຫາວິທີແກ້ໄຂ ເພື່ອ ຫລຸດຜ່ອນຜົນກະທົບ ດັ່ງກ່າວ ໃນຂະນະທີ່ມາດຕະການອື່ນໆ ເຊັ່ນ ການແບ່ງປັນຜົນປະໂຫຍດ ໃຫ້ແກ່ ບັນດາປະເທດ ທີ່ໄດ້ຮັບຜົນກະທົບ, ການຄຸ້ມຄອງສິ່ງແວດລ້ອມຂ້າມຊາດ ແລະ ກອງທຶນທາງສັງຄົມ ກໍຕ້ອງໄດ້ປະຕິບັດຮ່ວມກັນ".

ໃນບົດຖະແຫລງການຢ່າງທາງການ, ກຳປູເຈັຽ ແຈ້ງຕື່ມອີກວ່າ "ເນື່ອງຈາກຂໍ້ມູນກ່ຽວກັບໂຄງການດັ່ງກ່າວ ຍັງມີລັກສະນະຈຳກັດ ດັ່ງນັ້ນ ຈຶ່ງສະເໜີ ໃຫ້ຂະຫຍາຍເວລາ ການປຶກສາຫາລືນີ້ອອກໄປຕື່ມອີກ".

ໂດຍຮັບຮູ້ບົດບາດທີ່ສຳຄັນຂອງໂຄງການດັ່ງກ່າວ ໃນແຜນພັດທະນາຂອງ ສປປ ລາວ, ປະເທດ ໄທ ໄດ້ໃຫ້ທັດສະນະວ່າ ໃນການເດີນໜ້າປະຕິບັດໂຄງການ, ຕ້ອງມີມາດຕະການ ການຫລຸດຜ່ອນ ຜົນກະທົບທີ່ຮັດກຸມ ເພື່ອຜົນປະໂຫຍດຂອງປະຊາຊົນ ແລະ ສິ່ງແວດລ້ອມຂອງພາກພື້ນນີ້.

ໂດຍຊີ້ແຈງປະເດັນຕ່າງໆທີ່ໄດ້ຍົກໃນເວລາດຳເນີນການປຶກສາຫາລືກັບ ປະຊາຊົນ ກ່ຽວກັບ ສະພາບຄວາມເຊື່ອມໂຊມຂອງສິ່ງແວດລ້ອມ ເຊັ່ນ ການສູນເສັຽຂອງປາ ແລະ ດິນປຽກຊຸ່ມ ແລະ ການຂາດມາດຕະການການຫລຸດຜ່ອນຜົນກະທົບ ທີ່ມີການກຳນົດຢ່າງຈະແຈ້ງ ປະເທດ ໄທ ກ່າວວ່າ ຕົນມີຄວາມກັງວົນ ກ່ຽວກັບ ວິຖີຊີວິດ ຂອງປະຊາຊົນ ທີ່ອາໄສ ແມ່ນ້ຳສາຍນີ້ ເປັນແຫລ່ງທຳມາຫາກິນ.

ປະເທດ ໄປ ຍັງໄດ້ຊີ້ແຈງຄວາມກັງວົນ ທີ່ໄດ້ຍົກຂຶ້ນ ໃນເວລາປຶກສາຫາລື ກັບປະຊາຊົນ ວ່າ ປະເດັນຄວາມຍືນຍົງຂອງໂຄງການ ຍັງເປັນບັນຫາທີ່ຖົກຖຽງກັນ ແລະ ຂອບສຳລັບຂະບວນການປຶກສາຫາລືທີ່ໄດ້ກຳນົດໄວ້ ເປັນລະບຽບການ ຍັງບໍ່ທັນພຽງພໍ ແລະ ຕ້ອງໄດ້ເສີມຂະຫຍາຍຕື່ມອີກ.

ທ່ານ ຈະຕຸພັນ ບຸລຸສະພາກ, ຫົວໜ້າກົມຊັບພະຍາກອນນ້ຳ ຂອງ ລາຊາອານາຈັກ ໄທ, ສະແດງທັດສະນະ ໃນບົດຖະແຫລງການຢ່າງທາງການ ກ່ຽວກັບໂຄງການນີ້ວ່າ “ດ້ວຍເຫດນັ້ນ, ພວກຂ້າພະເຈົ້າຢາກເຫັນວ່າ ມີການຮັບພິຈາລະນາ ບັນດາຄຳເຫັນ ແລະ ຄວາມກັງວົນຂອງປະຊາຊົນ”.

ໃນເວລາດຽວກັນ, ປະເທດ ຫວຽດນາມ ສະແດງຄວາມກັງວົນ ກ່ຽວກັບ ການຂາດການປະເມີນຜົນອັນເໝາະສົມ, ສອດຄ່ອງ ແລະ ຮອບດ້ານ ກ່ຽວກັບ ຜົນກະທົບ ຂ້າມຊາດ ແລະ ສະສົມ ທີ່ ໂຄງການອາດຈະກໍໃຫ້ເກີດ ຢູ່ເຂດລຸ່ມແມ່ນ້ຳຂອງ ໂດຍສະເພາະ ໃນເຂດສາມຫລ່ຽມແມ່ນ້ຳຂອງ.

ປະເທດ ຫວຽດນາມ ສະເໜີ ໃຫ້ມີການເລື່ອນເວລາການປະຕິບັດໂຄງການນີ້ ແລະ ໂຄງການອື່ນໆ ທີ່ມີແຜນຈະສ້າງຕາມລຳແມ່ນ້ຳຂອງ ອອກໄປຢ່າງນ້ອຍ 10 ປີ.

ທ່ານ ເລ ດຸກ ຕຣຸງ, ຫົວໜ້າຄະນະຜູ້ແທນ ຫວຽດນາມ, ກ່າວວ່າ: ”ການເລື່ອນເວລາ ອາດຖືໄດ້ວ່າ ເປັນວິທີການທີ່ດີ ເພື່ອໃຫ້ບັນດາລັດຖະບານ ສາມະຊິກ ມີເວລາພຽງພໍສຳລັບ ການດຳເນີນ ບົດສຶກສາຄົ້ນຄວ້າ ທີ່ມີລັກສະນະຮອບດ້ານ ແລະ ມີຄຸນນະພາບ ກ່ຽວກັບ ຜົນກະທົບສະສົມທີ່ອາດເກີດຂຶ້ນ.

ປະເທດ ຫວຽດນາມ ກ່າວຕື່ມອີກວ່າ ໄລຍະເວລາທີ່ມີລັກສະນະຈຳກັດ ສຳລັບຂະບວນການປຶກສາຫາລືຍັງບໍ່ທັນເໝາະສົມ ເພື່ອອຳນວຍຄວາມສະດວກໃຫ້ແກ່ການບັນລຸໂຄງການ. ທ່ານ ດຸກ ຕຣຸງ ກ່າວຕື່ມອີກວ່າ: “ການເລື່ອນເວລາອອກໄປ ຈະຊ່ວຍໃຫ້ ປະເທດ ທີ່ກ່ຽວຂ້ອງ ມີຄວາມເຂົ້າໃຈທີ່ເລິກເຊິ່ງກວ່າເກົ່າ ແລະ ສ້າງຄວາມໝັ້ນໃຈໃຫ້ແກ່ ປະຊາຊົນ ແລະ ຊຸມຊົນທ້ອງຖິ່ນ.

ບັນດາ ສະມາຊິກ ຂອງ ຄະນະກຳມະການຮ່ວມ ຈະລາຍງານຜົນຂອງການຕັດສິນ ຕໍ່ລັດຖະມົນຕີຂອງຕົນໃນຕໍ່ໄປ

ຈົບ